ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຄະນະບໍລິຫານງານພັກ ທຫລ ດຳເນີນກອງປະຊຸມຄົບຄະນະ ຄັ້ງທີ 2 ສະໄໝທີ V ຂອງຕົນ





ໃນວັນທີ 20 ມັງກອນ 2026 ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ຄະນະບໍລິຫານງານພັກ ທຫລ ໄດ້ດຳເນີນກອງປະຊຸມຄົບຄະນະ ຄັ້ງທີ 2 ສະໄໝທີ V ຂອງຕົນ ໂດຍການເປັນປະທານຂອງ ສະຫາຍ ນ. ບຸນຄຳ ວໍລະຈິດ ຄະນະເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ ທຫລ, ມີບັນດາສະຫາຍຄະນະບໍລິຫານງານພັກ ທຫລ ຈຳນວນ 17 ສະຫາຍ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໃນຄັ້ງນີ້ ແມ່ນມີຄວາມໝາຍສຳຄັນເປັນຢ່າງຍິ່ງ ເນື່ອງຈາກໄດ້ຮັບຊາບ ແລະ ຄົ້ນຄວ້າປະກອບຄຳເຫັນຕໍ່ບັນດາເນື້ອໃນເອກະສານສຳຄັນ ເປັນຕົ້ນແມ່ນ: 1) ຮັບຊາບຕໍ່ກັບມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຮັບຮອງເອົາຄະນະບໍລິຫານງານພັກ ທຫລ ສະໄໝທີ V. 2)ຄົ້ນຄວ້າ-ປະກອບຄຳເຫັນຕໍ່ມະຕິຕົກລົງວ່າດ້ວຍການແບ່ງຄວາມຮັບ ຜິດຊອບພາຍໃນຄະນະບໍລິຫານງານພັກ ທຫລ ສະໄໝທີ V; ຄົ້ນຄວ້າ ຮ່າງມະຕິຕົກລົງວ່າດ້ວຍໜ້າທີ່, ຂອບເຂດສິດ ແລະ ແບບແຜນການນຳພາ-ວິທີເຮັດວຽກ ຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ V ແລະ ຄົ້ນຄວ້າ ຮ່າງແຜນດຳເນີນງານຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ V ແຕ່ປີ 2026-2030. ບັນດາເອກະສານເລົ່ານີ້ຈະເປັນພື້ນຖານໃນການນຳພາການເຄື່ອນໄຫວຕົວຈິງຂອງຄະນະບໍລິຫານງານພັກ ທຫລ ໃນໄລຍະ 5 ປີຕໍ່ໜ້າ.




ກອງປະຊຸມດັ່ງກ່າວໄດ້ດຳເນີນໄປເປັນເວລາ 1 ວັນເຕັມ ດ້ວຍບັນຍາກາດທີ່ເຄັ່ງຮ້ອນຟົດຟື້ນ ແລະ ມີເນື້ອໃນທີ່ເລິກເຊິ່ງ ເນື່ອງຈາກບັນດາສະຫາຍຄະນະບໍລິຫານງານພັກ ທຫລ ໄດ້ປະກອບຄວາມເຫັນຢ່າງກົງໄປກົງມາ, ເຮັດໃຫ້ກອງປະຊຸມດັ່ງກ່າວບັນລຸໝາກຜົນຕາມລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

**ຂ່າວ-ພາບ: ຫ້ອງການ ທະນາຄານແຫ່ງ ສປປ ລາວ**

**ຢູ່ເມືອງລາວໃຊ້ເງິນກີບລາວ**